# ລາຍລະອຽດຕິດຕໍ່


ກະຊວງອຸດສາຫະກຳ ແລະ ການຄ້າ
ກົມຊັບສິນທາງປັນຍາ
ໂທລະສັບ: +85621 213470-154
ອີເມລ໌: dip.laopdr@gmail.com (ພະແນກນະໂຍບາຍ ແລະ ພົວພັນຕ່າງປະເທດ)

ກະຊວງການເງິນ
ກົມພາສີ
ພະແນກຮ່ວມມືພາສີສາກົນ
ໂທລະສັບ: +85621 223524
ອີເມລ໌: clartelaos@gmail.com


ARISE+
ASEAN Intellectual Property Rights


Website: www.ariseplusipr.eu

Email: Arise+IPR@euipo.europa.eu

Facebook: facebook.com/EUIPcooperation

Twitter: @EUIPcooperation

LinkedIn: linkedin.com/company/euipcooperation/

Youtube: EU International Intellectual Property Cooperation


ARISE+ IPR


ແຜ່ນພັບນີ້ເຮັດຂຶ້ນໂດຍ ARISE+ IPR ໂດຍການຮ່ວມມືກັບ ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຄວາມຊ່ວຍເຫຼືອຈາກ Tilleke & Gibbins ເນື້ອໃນຂອງແຜ່ນພັບສະບັບນີ້ ແມ່ນຄວາມຮັບຜິດຊອບຂອງໂຄງການ ARISE+ IPR ແຕ່ພຽງຜູ້ດຽວ ແລະ ບໍ່ໄດ້ສະທ້ອນເຖິງຄຳຄິດເຫັນ ຂອງສະຫະພາບເອີຣົບ (EUIPO) -ພຶດສະພາ 2021


# ການບັງຄັບປະຕິບັດໃຊ້ກົດໝາຍ

**ຄວນເຮັດແນວໃດ ເມື່ອຮູ້ວ່າສິດຊັບສິນທາງປັນຍາຂອງທ່ານ ຖືກລະເມີດ?**
ເມື່ອສິດຊັບສິນທາງປັນຍາຂອງທ່ານຖືກລະເມີດ ທ່ານສາມາດດຳເນີນການທາງດ້ານກົດໝາຍເພື່ອປົກປ້ອງສິດຂອງທ່ານ ດ້ວຍສອງວິທີຄື: ການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ ທາງດ້ານບໍລິຫານ ແລະ ດຳເນີນການທາງດ້ານຕຸລາການ.

ສຳລັບການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ແມ່ນທ່ານສາມາດຍື່ນຄຳສະເໜີ ກັບພະແນກອຸດສາ ຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງ ຫຼື ກົມຊັບສິນທາງປັນຍາ ເພື່ອແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ ໂດຍການໄກ່ເກ່ຍ ຫຼື ຕັດສິນ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ.

ສຳລັບ ການດຳເນີນການທາງດ້ານຕຸລາການ ແມ່ນທ່ານສາມາດຍື່ນຄຳສະເໜີ ຫາສານປະຊາຊົນ ເພື່ອຕັດສິນຄະດີ ກ່ຽວກັບ ຊັບສິນທາງປັນຍາ.

---

**ເຈົ້າໜ້າທີ່ບັງຄັບປະຕິບັດໃຊ້ກົດໝາຍ ທີ່ຮັບຜິດຊອບ ກ່ຽວກັບ ການປົກປ້ອງສິດຊັບສິນທາງປັນຍາ ໃນ ສປປ ລາວ.**

ເຈົ້າໜ້າທີ່ບັງຄັບປະຕິບັດກົດໝາຍ ທີ່ຮັບຜິດຊອບ ກ່ຽວກັບ ການປົກປ້ອງສິດຊັບສິນທາງປັນຍາ ປະກອບມີຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນດັ່ງນີ້:
- ຂະແໜງ ອຸດສາຫະກຳ ແລະ ການຄ້າ (ການຄ້າພາຍໃນ);
- ປ້ອງກັນຄວາມສະຫງົບ (ຕຳຫຼວດເສດຖະກິດ);
- ການເງິນ (ພາສີ);
- ສາທາລະນະສຸກ;
- ສານປະຊາຊົນ;
- ໄອຍະການ;
- ພາກສ່ວນທີ່ກ່ຽວຂ້ອງອື່ນໆ.

---

**ມີມາດຕະການບັງຄັບໃຊ້ໃດແດ່ ທີ່ສາມາດປ້ອງກັນ ຫຼື ສະກັດກັ້ນການລະເມີດຊັບສິນທາງປັນຍາ?**

ມາດຕະການບັງຄັບໃຊ້ທີ່ສາມາດປ້ອງກັນ ຫຼື ສະກັດກັ້ນ ການລະເມີດສິດຊັບສິນທາງປັນຍາມີດັ່ງນີ້:
1. ມາດຕະການທາງແພ່ງ: ຜູ້ລະເມີດ ຕ້ອງຊົດເຊີຍຄ່າເສຍຫາຍ ໃຫ້ແກ່ເຈົ້າຂອງສິດຊັບສິນທາງປັນຍາ;
2. ມາດຕະການທາງອາຍາ: ຜູ້ລະເມີດ ຈະຖືກປັບໃໝ ແລະ ຕັດອິດສະຫຼະພາບ ຕາມກໍລະນີ ເບົາ ຫຼື ໜັກ;
3. ມາດຕະການສະກັດກັ້ນການລະເມີດຊັບສິນທາງປັນຍາ ຕາມຊາຍແດນ: ເຈົ້າໜ້າທີ່ພາສີ ສາມາດ ກວດກາ, ຍຶດ ແລະ ກັກ ສິນຄ້າ ທີ່ລະເມີດເຄື່ອງໝາຍການຄ້າ, ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ.

---

**ການຍື່ນຄຳຮ້ອງຂໍແກ້ໄຂການລະເມີດຊັບສິນທາງປັນຍາ ຕ້ອງປະຕິບັດຕາມຂັ້ນຕອນຫຍັງແດ່?**

ທ່ານສາມາດດາວໂຫລດ ແບບພິມຄຳສະເໜີ ແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ໄດ້ທີ່ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາຂອງກົມຊັບສິນທາງປັນຍາ (www.dip.gov.la), ປະກອບຂໍ້ມູນຕາມແບບພິມຂອງກົມ ແລ້ວຍື່ນຄຳສະເໜີ ນຳກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ຫຼື ນະຄອນຫຼວງ ພ້ອມທັງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ.
ໃນກໍລະນີ ການຍື່ນຄຳຮ້ອງຟ້ອງ ຕໍ່ສານປະຊາຊົນ ແມ່ນໃຫ້ປະຕິບັດຕາມລະບຽບການ ແລະ ຂັ້ນຕອນຂອງສານປະຊາຊົນ.

**ເຈົ້າຂອງສິດຊັບສິນທາງປັນຍາ ສາມາດຮຽກຮ້ອງ ຄ່າຊົດເຊີຍທາງດ້ານກົດໝາຍຫຍັງແດ່ ກັບຜູ້ທີ່ລະເມີດສິດ?**
ເຈົ້າຂອງສິດຊັບສິນທາງປັນຍາ ສາມາດຮຽກຮ້ອງຄ່າຊົດເຊີຍທາງດ້ານກົດໝາຍ ດັ່ງນີ້:
- ຄ່າເສຍຫາຍ ຕາມທີ່ຜູ້ລະເມີດໄດ້ກໍ່ຂຶ້ນ ໃນກໍລະນີທີ່ເປັນການກະທຳຜິດທາງແພ່ງ;
- ປັບໃໝ 1% ຂອງມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນ ສຳລັບຜູ້ລະເມີດສິດຊັບສິນທາງປັນຍາ ໂດຍເຈດຕະນາ ຫຼື ຜູ້ລະເມີດກົດໝາຍ ຄັ້ງທີສອງ ຫຼື ຄັ້ງຕໍ່ໄປ ໂດຍບໍ່ໄດ້ເຈດຕະນາ. ປັບໃໝ 5% ຂອງມູນຄ່າຄວາມເສຍຫາຍທີ່ເກີດຂຶ້ນໃນການລະເມີດແຕ່ລະຄັ້ງ ສຳລັບການລະເມີດ ຄັ້ງທີສອງ ຫຼື ຄັ້ງຕໍ່ໆໄປ ໂດຍເຈດຕະນາ;
- ລົງໂທດຕັດອິດສະຫຼະພາບ ແຕ່ 1 ຫາ 3 ປີ ຫຼື ດັດສ້າງໂດຍບໍ່ຕັດອິດສະຫຼະພາບ ແລະ ຈະຖືກປັບໃໝ 5,000,000 ກີບ ຫາ 20,000,000 ກີບ ໃນກໍລະນີທີ່ເປັນການກະທຳຜິດທາງອາຍາ;
- ລົງໂທດຕັດອິດສະຫຼະພາບ ແຕ່ 2 ເດືອນ ຫາ 2 ປີ ແລະ ຈະຖືກປັບໃໝ ແຕ່ 5,000,000 ລ້ານ-10,000,000 ລ້ານກີບ ສຳລັບການຜະລິດ, ຂາຍ ສິນຄ້າປອມ ຫຼື ຮຽນແບບ; ລົງໂທດຕັດອິດສະຫຼະພາບ ແຕ່ 1 ຫາ 3 ປີ ແລະ ປັບໃໝ 10,000,000-50,000,000ກີບ. ໃນກໍລະນີທີ່ການກະທຳຜິດເປັນອາຈິນ, ມີການຈັດຕັ້ງເປັນກຸ່ມ ຫຼື ກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ.

---

**ມີຫຼັກຖານໃດ ທີ່ຈຳເປັນເພື່ອສະແດງໃຫ້ເຫັນການລະເມີດຊັບສິນທາງປັນຍາ?**
ໃນການຍື່ນຄຳສະເໜີຂໍແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ການລະເມີດສິດຊັບສິນທາງປັນຍາ ທ່ານສາມາດປະກອບຫຼັກຖານຕ່າງໆ ດັ່ງນີ້:
- ໃບຢັ້ງຢືນການຈົດທະບຽນຊັບສິນທາງປັນຍາ;
- ໃບມອບສິດ ໃນກໍລະນີຍື່ນຜ່ານຜູ້ຕາງໜ້າ;
- ຮູບຖ່າຍ ຫຼື ຕົວຢ່າງ ສິນຄ້າ ທີ່ລະເມີດຊັບສິນທາງປັນຍາ;
- ຂໍ້ມູນ ຫຼື ຫຼັກຖານອື່ນໆ.

---

**ນອກຈາກຮ້ອງຟ້ອງຕໍ່ສານ ຍັງມີທາງເລືອກໃດແດ່ ໃນການແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ການລະເມີດສິດຊັບສິນທາງປັນຍາ?**

ນອກຈາກການຮ້ອງຟ້ອງຕໍ່ສານ, ທ່ານສາມາດເລືອກຮູບແບບການແກ້ໄຂທາງດ້ານບໍລິຫານ ໂດຍການໄກ່ເກ່ຍ ຢູ່ກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ຫຼື ພະແນກອຸດສາຫະກຳ ແລະ ການຄ້າແຂວງ ແລະ ນະຄອນຫຼວງ. ນອກນັ້ນ, ທ່ານ ກໍ່ສາມາດຍື່ນຄຳສະເໜີແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ການລະເມີດສິດຊັບສິນທາງປັນຍາ ຕໍ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (EDRC), ກະຊວງຍຸຕິທຳ.

ນອກຈາກນັ້ນ, ທ່ານຍັງສາມາດສະເໜີແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບ ສິນຄ້າປອມແປງເຄື່ອງໝາຍການຄ້າ ຫຼື ສິນຄ້າທີ່ລະເມີດລິຂະສິດ ຕາມດ່ານຊາຍແດນ ກັບເຈົ້າໜ້າທີ່ພາສີ. ສຳລັບ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາທາງດ້ານບໍລິຫານ ຕາມດ່ານຊາຍແດນ ແມ່ນໃຫ້ປະຕິບັດຕາມລະບຽບການຂອງຂະແໜງການເງິນ.



ARISE+
ASEAN Intellectual Property Rights




# ວິທີການບັງຄັບປະຕິບັດໃຊ້ ສິດຊັບສິນທາງປັນຍາ ໃນ ສປປ. ລາວ


Funded by the European Union

## ເຄື່ອງໝາຍການຄ້າ

**ເຄື່ອງໝາຍການຄ້າແມ່ນຫຍັງ?**

ເຄື່ອງໝາຍການຄ້າແມ່ນ ສັນຍາລັກໃດໜຶ່ງ ທີ່ໃຊ້ເພື່ອຈຳແນກສິນຄ້າ ຫຼື ການບໍລິການຂອງທ່ານກັບຂອງຄົນອື່ນ. ສັນຍາລັກ ອາດຈະເປັນ: ຄຳສັບ, ຕົວໜັງສື, ຕົວເລກ, ອົງປະກອບເປັນຮູບຮ່າງ, ຮູບຊົງ, ຮູບສາມມິຕິ, ຮູບທີ່ມີການເຄື່ອນເໜັງ ຫຼື ສິ່ງຫຸ້ມຫໍ່ ຂອງສິນຄ້າ ແລະ ການລວມກັນຂອງຫຼາຍສີ ເຊັ່ນດຽວກັບການລວມກັນ ຂອງສັນຍາລັກໃດໜຶ່ງນັ້ນ.

---

**ທ່ານສາມາດປົກປ້ອງເຄື່ອງໝາຍ ການຄ້າຂອງທ່ານຢູ່ ສປປ.ລາວ ໄດ້ແນວໃດ? ແລະ ເຈົ້າຂອງເຄື່ອງໝາຍການຄ້າທີ່ຈົດທະບຽນແລ້ວນັ້ນ ໄດ້ຮັບສິດຫຍັງແດ່?**

ທ່ານສາມາດປົກປ້ອງເຄື່ອງໝາຍການຄ້າຂອງທ່ານ ໄດ້ໂດຍການຍື່ນຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານລະບົບອອນລາຍ(ເລີ່ມເປີດໃຫ້ບໍລິການໃນປີ 2022), ສຳລັບເຄື່ອງໝາຍການຄ້າສາກົນ ສາມາດຍື່ນຜ່ານກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ. ທ່ານສາມາດດາວໂຫຼດຄຳຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າໄດ້ທີ່ ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ (www.dip.gov.la).

ເພື່ອໃຫ້ເຄື່ອງໝາຍການຄ້າຂອງທ່ານ ໄດ້ຮັບການຈົດທະບຽນ, ເຄື່ອງໝາຍການຄ້າຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີລັກສະນະສະເພາະ ແລະ ແຕກຕ່າງກັບເຄື່ອງໝາຍການຄ້າຂອງຜູ້ອື່ນ.
2. ບໍ່ຄືກັນ ຫຼື ຄ້າຍຄືກັນກັບ ເຄື່ອງໝາຍການຄ້າ ທີ່ໄດ້ຮັບການຈົດທະບຽນແລ້ວ
3. ບໍ່ຄືກັນ ຫຼື ຄ້າຍຄືກັນກັບ ເຄື່ອງໝາຍການຄ້າທີ່ມີຊື່ສຽງ ຫຼື ຖິ່ນກຳເນີດ
4. ບໍ່ມີລັກສະນະຕ້ອງຫ້າມ ເຊັ່ນ: ບໍ່ມີລັກສະນະ ປອມແປງ ຫຼື ຫຼອກລວງ, ບໍ່ປະກອບມີ ກາຊາດ, ຊື່ເມືອງ, ຊື່ແຂວງ, ຊື່ປະເທດ, ບໍ່ປະກອບມີສັນຍາລັກຂອງ ອົງການຈັດຕັ້ງລັດ ຫຼື ສາກົນ ແລະ ບໍ່ຂັດກັບຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ເມື່ອເຄື່ອງໝາຍການຄ້າຂອງທ່ານໄດ້ຮັບການຈົດທະບຽນແລ້ວ, ທ່ານມີສິດ ດັ່ງນີ້:

1. ປ້ອງກັນບໍ່ໃຫ້ຜູ້ອື່ນນຳໃຊ້ເຄື່ອງໝາຍການຄ້າ ທີ່ຄືກັນ ຫຼື ຄ້າຍຄືກັນ;
2. ປ້ອງກັນບໍ່ໃຫ້ຜູ້ອື່ນ ໂຄສະນາ, ຂາຍ, ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ຕິດເຄື່ອງໝາຍດັ່ງກ່າວ;
3. ປົກປ້ອງຜົນປະໂຫຍດຂອງທ່ານ ຈາກການລະເມີດເຄື່ອງໝາຍການຄ້າ ເຊັ່ນ: ທ່ານມີສິດຮ້ອງຟ້ອງ ແລະ ໄດ້ຮັບການຊົດເຊີຍ ຈາກຄວາມເສຍຫາຍທີ່ຜູ້ອື່ນໄດ້ກໍ່ຂຶ້ນ.




**ການກະທຳໃດ ທີ່ຖືວ່າເປັນການລະເມີດເຄື່ອງໝາຍການຄ້າ?**

ການກະທຳດັ່ງຕໍ່ໄປນີ້ ຈະຖືວ່າເປັນການລະເມີດເຄື່ອງໝາຍການຄ້າຂອງທ່ານ:

1. ການສ້າງ ແລະ ນຳໃຊ້ເຄື່ອງໝາຍທີ່ ຄືກັນ ຫຼື ຄ້າຍຄືກັນ ກັບເຄື່ອງໝາຍການຄ້າຂອງທ່ານ ທີ່ເຮັດໃຫ້ສາທາລະນະຊົນ ເກີດຄວາມສັບສົນ;
2. ການ ໂຄສະນາ, ຂາຍ, ນຳເຂົ້າ ຫຼື ສົ່ງອອກ ສິນຄ້າປອມແປງເຄື່ອງໝາຍການຄ້າຂອງທ່ານ.

---

**"ການນຳໃຊ້" ຂອງເຄື່ອງໝາຍການຄ້າ ມີຫຍັງແດ່?**

ເຄື່ອງໝາຍການຄ້າຂອງທ່ານ ຈະຖືວ່າຖືກ "ນຳໃຊ້" ກໍ່ຕໍ່ເມື່ອ ທ່ານໄດ້ເອົາເຄື່ອງໝາຍນັ້ນ ໄປໃຊ້ກັບ ສິນຄ້າ ຫຼື ການບໍລິການ ຂອງທ່ານ ຫຼື ຜູ້ທີ່ໄດ້ຮັບອະນຸຍາດຈາກທ່ານ ເພື່ອຈຸດປະສົງໃນການ ໂຄສະນາ, ຂາຍ, ສະເໜີຂາຍ ສິນຄ້າ ຫຼື ການບໍລິການ ຂອງທ່ານ ຫຼື ການນຳໃຊ້ໃນຮູບແບບອື່ນໆທີ່ຖືກຕ້ອງຕາມກົດໝາຍວ່າດ້ວຍຊັບສິນທາງປັນຍາ..

---

**ທ່ານສາມາດໃຫ້ຜູ້ອື່ນນຳໃຊ້ເຄື່ອງໝາຍການຄ້າຂອງທ່ານ ໂດຍຜ່ານສັນຍາໃນຮູບແບບໃດແດ່?**

ທ່ານສາມາດອະນຸຍາດໃຫ້ຜູ້ອື່ນນຳໃຊ້ເຄື່ອງໝາຍການຄ້າທີ່ໄດ້ຮັບການຈົດທະບຽນແລ້ວຂອງທ່ານ ໂດຍການເຮັດ ສັນຍາອະນຸຍາດນຳໃຊ້, ສັນຍາການເປັນຕົວແທນຈຳໜ່າຍ ຫຼື ສັນຍາການເປັນແຟຣນຊາຍ. ທ່ານຕ້ອງມາແຈ້ງ ກ່ຽວກັບ ສັນຍາອະນຸຍາດນຳໃຊ້ ກັບກົມຊັບສິນທາງປັນຍາ ເພື່ອໃຫ້ຜູ້ທີ່ໄດ້ຮັບອະນຸຍາດດັ່ງກ່າວ ມີສິດດຳເນີນການທາງດ້ານກົດໝາຍ ໃນການປົກປ້ອງສິດຕໍ່ເຄື່ອງໝາຍການຄ້າດັ່ງກ່າວ.

## ແບບອຸດສາຫະກຳ

**ແບບອຸດສາຫະກຳແມ່ນຫຍັງ?**

"ແບບອຸດສາຫະກຳ" ໝາຍເຖິງຮູບແບບ ຫຼື ຮູບຮ່າງ ຂອງຜະລິດຕະພັນທີ່ສ້າງຂຶ້ນ ຊຶ່ງປະກອບດ້ວຍຮູບຮ່າງ, ລວດລາຍ, ເສັ້ນສາຍ, ສີສັນ ແລະ ອື່ນໆ.

---

**ທ່ານສາມາດປົກປ້ອງແບບອຸດສາຫະກຳຂອງທ່ານໃນປະເທດລາວ ໄດ້ແນວໃດ?**

ທ່ານສາມາດປົກປ້ອງແບບອຸດສາຫະກຳຂອງທ່ານ ໄດ້ໂດຍການຍື່ນຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳກັບ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຜ່ານລະບົບອອນລາຍ(ເລີ່ມເປີດໃຫ້ບໍລິການໃນປີ 2022). ທ່ານສາມາດດາວໂຫຼດຄຳຮ້ອງຂໍຈົດທະບຽນແບບອຸດສາຫະກຳໄດ້ທີ່ ລະບົບບໍລິການຂໍ້ມູນຂ່າວສານຊັບສິນທາງປັນຍາ (www.dip.gov.la).

**ແບບໃດ ທີ່ສາມາດ ແລະ ບໍ່ສາມາດ ຈົດທະບຽນແບບອຸດສາຫະກຳໄດ້?**

ເພື່ອໃຫ້ແບບອຸດສາຫະກຳຂອງທ່ານ ໄດ້ຮັບການຈົດທະບຽນ, ແບບອຸດສາຫະກຳຕ້ອງມີເງື່ອນໄຂ ດັ່ງນີ້:

1. ຕ້ອງເປັນແບບໃໝ່ ຊຶ່ງບໍ່ເຄີຍຖືກເປີດເຜີຍ ສູ່ສາທາລະນະຊົນມາກ່ອນ ດ້ວຍວາລະສານ ຫຼື ດ້ວຍການນຳມາໃຊ້ຕົວຈິງ ຫຼື ດ້ວຍການວາງສະແດງ ຫຼື ຮູບການອື່ນ ຢູ່ ສປປ.ລາວ ຫຼື ໃນແຫ່ງໃດໜຶ່ງໃນໂລກ ກ່ອນວັນຍື່ນຄຳຮ້ອງ ຫຼື ກ່ອນວັນບູລິມະສິດຂອງຄຳຮ້ອງຂໍຈົດທະບຽນດັ່ງກ່າວ.
2. ຕ້ອງເປັນສິ່ງປະດັບ ຊຶ່ງເຮັດໃຫ້ວັດຖຸ ທີ່ນຳເອົາແບບໄປໃຊ້ ຫຼື ເອົາແບບໄປຕິດໃສ່ຕົວຂອງວັດຖຸເອງ ເກີດມີຮູບຊົງພາຍນອກພິເສດ.
   ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

ແບບອຸດສາຫະກຳຂອງທ່ານ ຈະບໍ່ສາມາດຈົດທະບຽນໄດ້ ຖ້າຫາກວ່າ:

1. ແບບ ທີ່ມີຮູບຊົງພາຍນອກ ເກີດຈາກຮູບຊົງເຕັກນິກຂອງວັດຖຸ ຊຶ່ງໃນນັ້ນແບບ ໄດ້ຖືກນຳມາໃຊ້ ຫຼື ສ້າງໃຫ້ເປັນຮູບຮ່າງຂຶ້ນມາກ່ອນແລ້ວ.
2. ແບບ ທີ່ຂັດຕໍ່ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.
   ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 22 ຂອງກົດໝາຍວ່າດ້ວຍຊັບສິນທາງປັນຍາ.

---

**ການກະທຳໃດ ທີ່ຖືວ່າເປັນການລະເມີດແບບອຸດສາຫະກຳ?**

ການກະທຳ ທີ່ຖືວ່າເປັນການລະເມີດແບບອຸດສາຫະກຳຂອງທ່ານ ແມ່ນການຜະລິດ, ຂາຍ ຫຼື ນຳເຂົ້າວັດຖຸ ທີ່ໃຊ້ແບບອຸດສາຫະກຳ ຫຼື ເປັນຮູບຊົງແບບອຸດສາຫະກຳ ຊຶ່ງເປັນການກ່າຍແບບ ຫຼື ລອກຮຽນແບບຂອງແບບອຸດສາຫະກຳ ເພື່ອຈຸດປະສົງທາງການຄ້າ ໂດຍບໍ່ໄດ້ຮັບອະນຸຍາດຈາກທ່ານ.



FIG. 7 is a perspective view of the agricultural management machine



## ຖິ່ນກຳເນີດ

**ຖິ່ນກຳເນີດ ແມ່ນຫຍັງ?**

ຖິ່ນກຳເນີດ ແມ່ນ ສັນຍາລັກ ທີ່ນຳໃຊ້ກັບສິນຄ້າ ເພື່ອບົ່ງບອກທີ່ມາຂອງແຫຼ່ງຜະລິດສິນຄ້າ ສະເພາະໃດໜຶ່ງ ຊຶ່ງແຫຼ່ງຜະລິດສິນຄ້າດັ່ງກ່າວເປັນສິ່ງສຳຄັນ ທີ່ພາໃຫ້ສິນຄ້ານັ້ນມີ ຄຸນະພາບ ແລະ ຊື່ສຽງ ຫຼື ຄຸນລັກສະນະອື່ນ. ສະນັ້ນ, ຖິ່ນກຳເນີດ ຈຶ່ງເປັນຄືກັນກັບຍີ່ຫໍ້ຂອງທ້ອງຖິ່ນສະເພາະ ທີ່ບົ່ງບອກເຖິງ ຄຸນະພາບ ຫຼື ຄຸນລັກສະນະອື່ນ ແລະ ແຫຼ່ງທີ່ມາຂອງສິນຄ້າ.

---

**ຄວາມແຕກຕ່າງ ລະຫວ່າງ ຖິ່ນກຳເນີດ ແລະ ເຄື່ອງໝາຍການຄ້າມີຫຍັງແດ່?**

ຖິ່ນກຳເນີດ ແລະ ເຄື່ອງໝາຍການຄ້າ ມີຄວາມແຕກຕ່າງກັນຄື:

- ຖິ່ນກຳເນີດ ຕ້ອງຕິດພັນກັບ ແຫຼ່ງຜະລິດສິນຄ້າສະເພາະໃດໜຶ່ງ ຊຶ່ງສິນຄ້າຖິ່ນກຳເນີດຕ້ອງມີຄຸນລັກສະນະສະເພາະ ຈຶ່ງເຮັດໃຫ້ສິນຄ້າຖິ່ນກຳເນີດມີເອກະລັກສະເພາະ ແລະ ແຕກຕ່າງກັບສິນຄ້າປະເພດດຽວກັນ ທີ່ຜະລິດຢູ່ບ່ອນອື່ນ. ກາໝາຍຖິ່ນກຳເນີດ ບໍ່ສາມາດນຳໄປໃຊ້ ກັບສິນຄ້າອື່ນທີ່ບໍ່ໄດ້ມາຈາກແຫຼ່ງຜະລິດສິນຄ້າທີ່ຖືກກຳນົດໃຫ້ເປັນຖິ່ນກຳເນີດ ຫຼື ກັບສິນຄ້າຂອງຜູ້ຜະລິດທີ່ບໍ່ໄດ້ເປັນສະມາຊິກຂອງສະມາຄົມສົ່ງເສີມຖິ່ນກຳເນີດນັ້ນ.
- ເຄື່ອງໝາຍການຄ້າ ແມ່ນສັນຍາລັກທີ່ໃຊ້ຈຳແນກ ສິນຄ້າ ຫຼື ການບໍລິການຂອງເຈົ້າຂອງເຄື່ອງໝາຍການຄ້າ ກັບຂອງຄົນອື່ນ. ເຄື່ອງໝາຍການຄ້າ ບໍ່ໄດ້ຕິດພັນກັບແຫຼ່ງກຳເນີດສິນຄ້າສະເພາະໃດໜຶ່ງ, ແຕ່ຕິດພັນກັບເຈົ້າຂອງເຄື່ອງໝາຍການຄ້ານັ້ນ.

---

**ໃນກໍລະນີໃດທີ່ຖິ່ນກຳເນີດ ຈະກາຍເປັນຊື່ທົ່ວໄປ?**

ຊື່ຂອງຖິ່ນກຳເນີດ ຈະກາຍເປັນຊື່ທົ່ວໄປ ຢູ່ ສປປ ລາວ ກໍ່ຕໍ່ເມື່ອຖິ່ນກຳເນີດໄດ້ມີຊື່ສຽງ ແລະ ໄດ້ມີການເອີ້ນຊື່ຂອງຖິ່ນກຳເນີດດັ່ງກ່າວໃຫ້ເປັນຊື່ລວມຂອງສິນຄ້າປະເພດດຽວກັນ ເປັນໄລຍະເວລາດົນນານ ຈົນກາຍເປັນຄວາມຊິນເຄີຍ ຫຼື ເປັນປະເພນີ ຂອງປະຊາຊົນລາວ.

---

**ການກະທຳໃດ ທີ່ເປັນການລະເມີດຖິ່ນກຳເນີດ?**

ການລະເມີດຖິ່ນກຳເນີດ ແມ່ນການກະທຳ ດັ່ງນີ້:

- ການນຳໃຊ້ ຊື່ຖິ່ນກຳເນີດ ຕໍ່ສິນຄ້າຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກເຈົ້າຂອງຖິ່ນກຳເນີດ;
- ການນຳໃຊ້ ຊື່ຖິ່ນກຳເນີດ ເພື່ອປະກອບເຂົ້າໃນເຄື່ອງໝາຍການຄ້າຂອງຕົນ;
- ການ ໂຄສະນາ, ຂາຍ, ນຳເຂົ້າ ຫຼື ສົ່ງອອກ ສິນຄ້າທີ່ນຳໃຊ້ຖິ່ນກຳເນີດໂດຍບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກເຈົ້າຂອງຖິ່ນກຳເນີດ ຫຼື ສິນຄ້າທີ່ນຳເອົາຖິ່ນກຳເນີດເຂົ້າໃນເຄື່ອງໝາຍການຄ້າ;
- ການນຳໃຊ້ໃດໆຂອງຖິ່ນກຳເນີດ ທີ່ຈະເຮັດໃຫ້ຜູ້ບໍລິໂພກເຂົ້າໃຈຜິດ ເຖິງແຫຼ່ງທີ່ມາຂອງສິນຄ້າ.

